**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈໍາປາສັກ

ເລກທີ...03.../ຈຂ.ຈສ.

ແຂວງຈໍາປາສັກ, ວັນທີ...20...ມີນາ 2017.

**ຄໍາສັ່ງ**

**ຂອງທ່ານ ເຈົ້າແຂວງງ ຈໍາປາສັກ**

**ເຖິງ:** ທ່ານ ຫົວໜ້າພະແນກການ, ກົມກອງ ແລະ ທ່ານເຈົ້າເມືອງ 10 ຕົວເມືອງ ໃນທົ່ວແຂວງ.

**ເລື່ອງ:** ການຍຸບເລີກປ້ອມ, ດ່ານ, ຈຸດກວດກາຂອງສາຍກວດຕ່າງໆ ລວມທັງປ້ອມກວດກາ ຂອງ ເຈົ້າໜ້າທີ່ຕໍາຫລວດ ຢູ່ແຕ່ລະເມືອງ ແລະ ຕາມເສັ້ນທາງຕ່າງໆ ໃນທົ່ວແຂວງຈໍາປາສັກ.

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14/12/2015.
- ອີງຕາມ ຜົນກອງປະຊຸມຂອງຄະນະປະຈໍາພັກແຂວງສະໄໝສາມັນປະຈໍາເດືອນ ກຸມພາ 2017.

**ເຈົ້າແຂວງງ ຈໍາປາສັກ ອອກຄໍາສັ່ງດັ່ງນີ້:**

1. ໃຫ້ຍຸບເລີກປ້ອມ, ດ່ານ, ຈຸດກວດກາຕ່າງໆ ທີ່ແຂວງບໍ່ໄດ້ກໍານົດຢ່າງເປັນທາງການຕາມສາຍທາງເລກທີ 13 ແລະ ທາງຫລວງຕ່າງໆ ທົ່ວແຂວງຈໍາປາສັກ.

2. ກໍານົດຈຸດກວດກາ ຂອງເຈົ້າໜ້າທີ່ ດັ່ງນີ້:

2.1. *ຈຸດກວດກາຂອງເຈົ້າໜ້າທີ່ປ້ອງກັນຄວາມສະຫງົບແຂວງ ປະກອບມີ 3 ຈຸດ ຄື: (1).ຈຸດບ້ານນາດ່ານ* ຫລັກ 44 ເມືອງຊະນະສົມບູນ (ເສັ້ນທາງ 13 ເໜືອ), (2).ຈຸດຫລັກ 84 ເມືອງໂຂງ (ເສັ້ນທາງເລກທີ 13 ໃຕ້) ແລະ (3) ຈຸດບ້ານແກ້ງເກັຍ ຫລັກ 50 ເມືອງບາຈຽງຈະເລີນສຸກ (ເສັ້ນທາງເລກ 20).

- ໃຫ້ປະຕິບັດຕາມໜ້າວຽກວິຊາສະເພາະ ຂອງວຽກງານ ປກສ ເທົ່ານັ້ນ.

2.2. ຈຸດປະສານຂອງກອງກວດກາພາສີ ປະຈໍາແຂວງ ມີ 03 ຈຸດຄື: 1). ຈຸດປະສານງານຫລັກ 30 (ປາກເຊ-ວັງເຕົ່າ ເສັ້ນທາງເລກທີ 16 ). 2), ຈຸດປະສານງານຫລັກ 7 ສາຍເໜືອ (ເສັ້ນທາງເລກທີ 13 ເໜືອ). 3), ຈຸດປະສານງານຫລັກ 13 (ເສັ້ນ ທາງເລກທີ 16 ປາກຊ່ອງ).

- ເຮັດໜ້າທີ່ກວດກາສະກັດກັ້ນການລັກລອບຂົນສິ່ງສິນຄ້າຜິດກົດໝາຍ ໂດຍອີງຕາມແຫລ່ງຂ່າວ, ຂໍ້ມູນ ແລະ ເປົ້າໝາຍ ທີ່ມີການສົງໃສ.

3. ໃຫ້ພະແນກການ, ກົມກອງ ແລະ ບັນດາເມືອງ ໃນທົ່ວແຂວງ ຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ຢ່າງເຂັ້ມງວດ ພ້ອມກວດກາການປະຕິບັດໜ້າທີ່ຂອງພະນັກງານ, ເຈົ້າໜ້າທີ່ໆ ຢູ່ພາຍໃນການຄຸ້ມຄອງຂອງຕົນ ໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ.

4. ມອບໃຫ້ພະແນກກວດກາລັດແຂວງ ເປັນເຈົ້າການ ໃນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ຂອງພາກສ່ວນຕ່າງໆ, ຖ້າພົບເຫັນການກະທໍາຜິດ ຄໍາສັ່ງສະບັບນີ້ ໃຫ້ປະຕິຕາມລະບຽບກົດໝາຍທີ່ກໍານົດໄວ້.

5. ບັນດາອົງການຈັດຕັ້ງພາກລັດ, ບັນດາຫົວໜ່ວຍທຸລະກິດ, ປະຊາຊົນ ຖ້າຫາກພົບເຫັນ ຫລື ມີຂໍ້ມູນເຄື່ອນໄຫວທີ່ບໍ່ຖືກຕ້ອງ ຂອງພະນັກງານ ແລະ ເຈົ້າໜ້າທີ່, ທ່ານ ສາມາດແຈ້ງຫາຫ້ອງວ່າການປົກຄອງແຂວງ, ພະແນກກວດກາລັດ ແຂວງ ເພື່ອເປັນຂໍ້ມູນໃນການຕິດຕາມກວດກາ ແລະ ປະຕິບັດວິໄນຕໍ່ຜູ້ກະທໍາຜິດ.

6. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ດຣ ບຸນທອງ ດີວິໄຊ